ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===0000===---

<u>ກະຊວງການເງິນ</u>

ເລກທີ:.....3646...../ກງ

ນະຄອນຫຼວງວຽງຈັນ, ວັນທີ:.....30 DEC 2013.....

## <u>ແຈ້ງການ</u>

ເຖິງ: ບັນດາກະຊວງ, ອົງການທຽບເທົ່າ, ບັນດາແຂວງ, ນະຄອນຫຼວງວຽງຈັນ, ພະນັກງານ, ທະຫານ, ຕຳຫຼວດ, ພໍ່ແມ່ປະຊາຊົນ ແລະ ພໍ່ຄ້າຊາວຂາຍໃນຂອບເຂດທົ່ວປະເທດ

ເລື່ອງ: ການຈັດຕັ້ງປະຕິບັດແຜນຫຼຸດຜ່ອນອັດຕາພາສີໃນຂອບສັນຍາການຄ້າຜະລິດຕະພັນອາຊຽນ (ATIGA) ແຕ່ປີ 2013-2015

- ອີງຕາມ ສານປະກາດການໃຫ້ສັດຕະຍະບັນຂອງປະທານປະເທດແຫ່ງ ສປປ ລາວ, ສະບັບລົງວັນທີ: 29 ກໍລະກົດ 2013
- ອີງຕາມ ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຕົກລົງໃຫ້ສັດຕະຍະບັນແກ່ແຜນຫຼຸດຜ່ອນອັດຕາພາສີຂອບສັນຍາການຄ້າຜະລິດຕະພັນອາຊຽນ (ATIGA) ແຕ່ປີ 2013-2015, ສະ ບັບເລກທີ: 018/ຄປຈ, ລົງວັນທີ: 04 ມິນາ 2013
- ອີງຕາມ ການຮັບຮອງແຜນຫຼຸດຜ່ອນອັດຕາພາສີຂອງ ສປປ ລາວ ໃນວາລະກອງປະຊຸມສະພາເຂດການຄ້າເສລີອາຊຽນຄັ້ງທີ 26, ວັນທີ: 27 ສິງຫາ 2012

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍສານປະກາດການໃຫ້ສັດຕະຍະບັນຂອງປະທານປະເທດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ແລະ ແຜນຮັບຮອງຂອງສະພາເຂດການຄ້າເສລີອາຊຽນ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ, ລັດຖະມົນຕີວ່າການກະຊວງການເງິນຈຶ່ງອອກແຈ້ງການດັ່ງນີ້:

1. ມອບໃຫ້ກົມພາສີຈົ່ງເປັນເຈົ້າການໃນການຈັດພິມແຜນຫຼຸດຜ່ອນອັດຕາພາສີປີ 2013-2015 ເຊິ່ງອີງຕາມສາລະບານອັດຕາພາສີລະບົບເອກະພາບອາຊຽນລຸ້ນປີ 2012 ເຊິ່ງປະກອບມີ: 21 ພາກ, 97 ໝວດ ແລະ 9.558 ລາຍການ;
2. ມອບໃຫ້ກົມພາສີຈັດຕັ້ງປະຕິບັດແຜນຫຼຸດຜ່ອນອັດຕາພາສີດັ່ງກ່າວ ນັບແຕ່ວັນທີ: 3 ກຸມພາ 2014 ເປັນຕົ້ນໄປ;
3. ມອບໃຫ້ກົມພາສີເຮັດບົດແນະນຳໃນການນຳໃຊ້ແຜນຫຼຸດຜ່ອນອັດຕາພາສີ ພ້ອມທັງໂຄສະນາເຜີຍແຜ່ໃຫ້ສັງຄົມ, ພະນັກງານພາສີ, ພາກສ່ວນທີ່ກ່ຽວຂ້ອງ ແລະ ພາກສ່ວນທຸລະກິດໃຫ້ມີຄວາມເຂົ້າໃຈ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດມີປະສິດທິຜົນ; ແລະ
4. ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

<u>ລັດຖະມົນຕີວ່າການກະຊວງການເງິນ</u>

ພູເພັດ ຄຳພູນວົງ